ສາທາລະນະລັດ ປາຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ຫ້ອງການ

ເລກທີ 457/ຫກ

ນະຄອນຫຼວງວຽງຈັນ, ວັນທີ 03 ພະຈິກ 2022

## ແຈ້ງການ

**ຮຽນ: ບັນດາກົມ, ສະຖາບັນ, ໂຮງຮຽນ ແລະ ກອງວິຊາການ ທີ່ຂຶ້ນກັບກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ທີ່ເຄົາລົບ ແລະ ນັບຖື**

**ເລື່ອງ: ຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດວຽກງານພາຍໃນກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 678/ນຍ, ລົງວັນທີ 21 ທັນວາ 2021;
- ອີງຕາມ ແຈ້ງການ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 39/ຖວທ, ລົງວັນທີ 21 ມັງກອນ 2021;
- ອີງຕາມ ທິດຊີ້ນຳຂອງລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຄັ້ງວັນທີ 21 ຕຸລາ 2022.

ຫ້ອງການ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຊາບວ່າ: ເພື່ອຄວາມເປັນເອກະພາບໃນການເຄື່ອນໄຫວວຽກງານພາຍໃນກະຊວງ. ສະນັ້ນ, ຫ້ອງການກະຊວງ ຈຶ່ງແຈ້ງມາຍັງບັນດາກົມ, ສະຖາບັນ, ໂຮງຮຽນ ແລະ ກອງວິຊາການ ເພື່ອຊາບ ແລະ ປະຕິບັດດັ່ງນີ້:

1. ສືບຕໍ່ເປັນເຈົ້າການໃນການຈັດຕັ້ງປະຕິບັດ ແຈ້ງການ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 39/ຖວທ, ລົງວັນທີ 21 ມັງກອນ 2021 ຢ່າງເຂັ້ມງວດ ( ລາຍລະອຽດມີເອກະສານແຈ້ງການຄັດຕິດມາພ້ອມນີ້ );

2. ໃນກໍລະນີໄດ້ຮັບການແຈ້ງເຊີນແບບໃນນາມສ່ວນຕົວ ຫຼືການຈັດຕັ້ງ ເພື່ອໃຫ້ເຂົ້າຮ່ວມກອງປະຊຸມສຳມະນາທັງພາຍໃນ ແລະ ຕ່າງປະເທດ ຫຼື ຈະມີການລາພັກຕ່າງໆ ໂດຍສະເພາະຕໍ່ກັບເປົ້າໝາຍຂັ້ນຫົວໜ້າກົມ, ຫົວໜ້າສະຖາບັນ, ໂຮງຮຽນ ແລະ ຫົວໜ່ວຍວິຊາການ ຂໍໃຫ້ມີໜັງສືເພື່ອມອບສິດໃຫ້ຜູ້ຮອງເປັນຜູ້ຮັກສາການແທນໃນໄລຍະເວລາທີ່ບໍ່ຢູ່ປະຈຳການ ເປັນລາຍລັກອັກສອນຄັກແນ່ ເພື່ອລາຍງານຄະນະນຳກະຊວງຮັບຊາບ;

3. ການສືບຕໍ່ນຳໃຊ້ ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບ ເຄື່ອນໄຫວວຽກງານຈັດກອງປະຊຸມ ສຳມະນາຕ່າງໆ ທີ່ລັດຖະມົນຕີ ຫຼື ຮອງລັດຖະມົນຕີ ໄດ້ເຊັນຂໍ້ຕົກລົງອະນຸມັດໄປແລ້ວ ຖ້າຫາກວ່າກາຍກຳນົດເວລາ 01 ເດືອນ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແມ່ນໃຫ້ຮ່າງຂໍ້ຕົກລົງ ເຊັນຄືນໃໝ່ ຈຶ່ງສາມາດນຳໃຊ້ເຄື່ອນວຽກງານໄດ້ ເພື່ອໃຫ້ສອດຄ່ອງກັບລະບຽບການເງິນທີ່ກຳນົດໄວ້ ໃນການຄິດໄລ່ເງິນ, ຂໍຖອນເງິນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອຊາບ ແລະ ພ້ອມກັນເອົາໃຈໃສ່ໃນການຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

**ຫົວໜ້າຫ້ອງການ**

ບົວໄລ ພານຸວົງ